**ອະນຸສັນຍາ ວ່າດ້ວຍການຫ້າມໃຊ້ ສະສົມ ຜະລິດແລະ ໂອນແລະ ການ ທຳລາຍທຸ່ນລະເບີດສັງຫານບຸກຄົນ**

**ພາກສະເໜີ**

ລັດພາຄີ

ມຸ່ງໝັ້ນທີ່ຈະຢຸດຕິຄວາມທຸກທໍລະມານ ແລະ ການສູນເສັຍທີ່ເກີດຈາກ ທຸ່ນລະເບີດສັງຫານບຸກຄົນ ຊຶ່ງສັງຫານ ຫລື ທຳໃຫ້ປະຊາຊົນ ນັບຮ້ອຍໆ ຄົນ ຊຶ່ງສ່ວນຫລາຍເປັນພົນລະເຮືອນ ຜູ້ບໍລິສຸດ ແລະ ບໍ່ສາມາດປ້ອງກັນ ຕົນເອງໄດ້ ໂດຍສະເພາະເດັກນ້ອຍ ຕ້ອງບາດເຈັບ ທໍລະມານໃນທຸກໆ ອາທິດ ຂັດຂວາງການພັດທະນາເສດຖະກິດ ແລະ ການບຸລະນະປະເທດ ເປັນອຸປະສັກຕໍ່ການເດີນທາງ ກັບ ຖິ່ນຖານເດີມຂອງ ຜູ້ ອົບພະຍົບລີ້ໄພ ແລະ ຜູ້ພັດຖິ່ນພາຍໃນປະເທດ ແລະ ສິ່ງຜົນຮ້າຍແຮງອື່ນໆ ນານນັບປີ ຫລັງຈາກການວາງທຸ່ນລະເບີດສັງຫານບຸກຄົນ.

ເຊື່ອວ່າ ຈຳເປັນຕ້ອງ ປະພຶດ ຢ່າງດີທີ່ສຸດ ເພື່ອມີສ່ວນຊ່ວຍໃນການປະເຊີນຄວາມລຳບາກໃນການ ຮື້ຖອນທຸ່ນລະເບີດສັງຫານບຸກຄົນ ຊຶ່ງໄດ້ຖືກວາງໄວ້ທົ່ວໂລກ ໂດຍວິທີການທີ່ມີປະສິດທິພາບ ແລະ ປະສານສົມທົບ ກັນ ແລະ ເພື່ອໃຫ້ແນ່ໃຈວ່າມີການ ທຳລາຍທຸ່ນລະເບີດດັ່ງກ່າວ .

ປາດຖະໜາທີ່ຈະປະພຶດຢ່າງດີທີ່ສຸດ ເພື່ອຈັດຫາຄວາມຊ່ວຍເຫລືອ ໃນການເອົາໃຈໃສ່ ແລະ ຟື້ນຟູໃຫ້ກັບ ສູ່ສະພາບເດີມລວມທັງການເຂົ້າຮ່ວມ ລະບົບສັງຄົມ ແລະ ເສດຖະກິດ ໃຫແກ່ຜູ້ປະສົບໄພ ທຸ່ນລະເບີດ.

ຮັບຮູ້ວ່າ ການຫ້າມ ທຸ່ນລະເບີດສັງຫານບຸກຄົນ ໂດຍສົມບູນແບບຈະເປັນມາດຕະການສ້າງຄວາມໄວ້ວາງໃຈ ທີ່ສຳຄັນ ປະການໜຶ່ງ ເຊັ່ນກັນ.

ຍິນດີຕໍ່ການຮັບເອົາພິທີສານວ່າດ້ວຍການຫ້າມ ຫລື ການ ກຳຈັດການໃຊ້ທຸ່ນລະເບີດ ກັບ ລະເບີດ ແລະ ອາວຸດອື່ນໆ ຊຶ່ງໄດ້ຮັບການດັດແກ້ ເມື່ອວັນທີ 3 ພຶດສະພາ 1996 ຄັດຕິດ ກັບ ອະນຸສັນຍາ ວ່າດ້ວຍການຫ້າມ ຫລື ການກຳຈັດ ການໃຊ້ອາວຸດຕາມແບບບາງຊະນິດ ທີ່ກໍ່ໃຫ້ເກີດການບາດເຈັບຢ່າງຮ້າຍແຮງຫລາຍເກີນໄປ ຫລື ກໍໃຫ້ເກີດຜົນໂດຍບໍ່ຈຳກັດເປົ້າໝາຍ ແລະ ຮຽກຮ້ອງໃຫ້ ລັດທຸກລັດ ທີ່ຍັງບໍ່ທັນໃຫ້ສັດຍາບັນ ດຳເນີນການໃຫ້ສັດຍາບັນ ພິທີສານ ນີ້ ໂດຍໄວທີ່ສຸດ.

ຍິນດີຕໍ່ຂໍ້ມະຕິຂອງ ສະຫະປະຊາຊາດ ເລກທີ 51 / 45 ເອສ ເມື່ອວັນທີ 10 ທັນວາ 1996. ຊຶ່ງຮຽກຮ້ອງ ໃຫ້ລັດທຸກລັດດຳເນີນການຢ່າງເຕັມທີ ເພື່ອຈັດທຳຄວາມຕົກລົງ ລະຫວ່າງ ປະເທດ ທີ່ມີ ຜົນຜູກພັນ ທາງດ້ານ ກົດໝາຍ ແລະ ມີປະສິດທິພາບ ເພື່ອຫ້າມການໃຊ້, ສະສົມ, ຜະລິດ ແລະ ໂອນທຸ່ນລະເບີດ ສັງຫານ ບຸກຄົນ.

ຍິນດີຕໍ່ມາດຕະການ ທີ່ໄດ້ມີຂື້ນໃນຫລາຍປີທີ່ຜ່ານມາທັງໃນລັກສະນະຝ່າຍດຽວ ແລະ ຫລາຍຝ່າຍໂດຍມີຈຸດປະສົງແນໃສ່ທີ່ຈະຫ້າມ, ກຳຈັດ ຫລື ລະງັບການນຳໃຊ້, ການສະສົມ, ການຜະລິດ ແລະ ການໂອນທຸ່ນລະເບີດ ສັງຫານບຸກຄົນ .

ເນັ້ນໜັກ ບົດບາດຂອງຈິດສຳນຶກຂອງສາທາລະນະຊົນ ທີ່ຈະສົ່ງເສີມ ຫລັກການ ມະນຸດ ສະທຳຕໍ່ໄປ ດັ່ງມີຫລັກຖານ ຈາກການຮຽກຮ້ອງ ໃຫ້ມີການຫ້າມທຸ່ນລະເບີດ ສັງຫານບຸກຄົນ ໂດຍສົມບູນແບບ ແລະ ໃສ່ໃຈ ເຖິງ ຄວາມພະຍາຍາມ ເພື່ອເປົ້າໝາຍ ດັ່ງກ່າວ ຊຶ່ງດຳເນີນການ ໂດຍຂະບວນ ການກາຊາດ ແລະ ຊີກວົງ ເດືອນແດງ ລະຫວ່າງປະເທດ , ອົງການ ໂຄສະນາ, ຂົນຂວາຍ ລະຫວ່າງ ປະເທດ ເພື່ອຫ້າມທຸ່ນລະເບີດທາງ ບົກ ແລະ ອົງການ ທີ່ບໍ່ຂຶ້ນ ກັບ ລັດຖະບານ ອື່ນໆ ຈຳນວນຫລວງຫລາຍໃນທົ່ວໂລກ.

ລະນຶກ ເຖິງ ຖະແຫລງການຂອງອອດຕາວາ ຄັ້ງວັນທີ 05 ຕຸລາ 1996 ແລະ ຖະແຫລງການຂອງ ກຸງບຣຸກແຊນ ຄັ້ງ ວັນທີ 27 ມິຖຸນາ 1997 ທີ່ເລັ່ງລັດໃຫ້ ປະຊາຄົມ ລະຫວ່າງ ປະເທດ ເຈລະນາ ຈັດທຳຄວາມ ຕົກລົງ ລະຫວ່າງປະເທດ ທີ່ມີຜົນຜູກພັນ ທາງດ້ານ ກົດໝາຍ ເພື່ອຫ້າມການນຳໃຊ້ , ສະສົມ , ຜະລິດ ແລະ ໂອນທຸ່ນລະເບີດສັງຫານບຸກຄົນ.

ຢ້ຳຄືນການຊຸກຍູ້ໃຫ້ລັດ ທຸກລັດ ຍຶດໝັ້ນໃນອະນຸສັນຍານີ້ ເປັນສິ່ງທີ່ເພິ່ງປາດຖະໜາ ແລະ ມຸ່ງໝັ້ນທີ່ ຈະດຳເນີນການຢ່າງແຂງຂັນໃນການສົ່ງເສີມຄວາມເປັນສາກົນຂອງອະນຸສັນຍາໃນຮອບການປະຊຸມຕ່າງໆ ທີ່ ກ່ຽວຂ້ອງເຊັ່ນ : ສະຫະປະຊາຊາດ ທີ່ປະຊຸມກ່ຽວກັບ ການລົດກຳລັງອາວຸດ ກຸ່ມ ແລະ ອົງການລະດັບພູມີພາກ ຕ່າງໆ ແລະ ການປະຊຸມ ທົບທວນຄືນ ອະນຸສັນຍາວ່າດ້ວຍ ການຫ້າມ ຫລື ການກຳຈັດການໃຊ້ອາວຸດຕາມ ແບບ ບາງຊະນິດທີ່ກໍ່ໃຫ້ເກີດ ການບາດເຈັບຢ່າງຮ້າຍແຮງຫລາຍເກີນໄປ ຫລື ກໍ່ໃຫ້ເກີດຜົນໂດຍບໍ່ຈຳກັດເປົ້າ ໝາຍ.

ຢືນຢູ່ບົນຫລັກການຂອງກົດໝາຍ ກ່ຽວກັບ ມະນຸດສະທຳລະຫວ່າງ ປະເທດ ທີ່ວ່າ ພາຄີ ທີ່ມີການຂັດ ກັນດ້ວຍ ອາວຸດຈະຖືກຈຳກັດສິດທິ ທີ່ຈະເລືອກ ວິທີ ຫລື ວິທີການສົງຄາມ ບົນຫລັກການທີ່ວ່າໃນລະຫວ່າງ ການຂັດກັນດ້ວຍອາວຸດຫ້າມໃຊ້ອາວຸດ ປືນໃຫຍ່ ວັດສະດຸ ແລະ ວິທີການສົງຄາມໃນລັກຊະນະທີ່ຈະກໍ່ໃຫ້ເກີດ ການບາດເຈັບ ທີ່ເກີນເຫດ ຫລື ການທໍລະມານ ໂດຍບໍ່ຈຳເປັນ ແລະ ບົນຫລັກການ ທີ່ຕ້ອງແຍກ ພົນລະເຮືອນ ແລະ ພົນສູ້ຮົບອອກຈາກກັນ

ໄດ້ຕົກລົງດັ່ງຕໍ່ໄປນີ້ .

## ມາດຕາ 1
## ພັນທະທົ່ວໄປ

1/- ບໍ່ວ່າໃນພຶດຕິກຳໃດໆ ລັດພາຄີ ຂອງແຕ່ລະລັດມີພັນທະຈະບໍ່ :

ເອ ) ນຳໃຊ້ທຸ່ນລະເບີດສັງຫານບຸກຄົນ.

ບີ ) ພັດທະນາ , ຜະລິດ, ຫລື ໄດ້ມາດ້ວຍວິທີ ອື່ນ, ສະສົມ, ຈັດມ້ຽນ ຫລື ໂອນໄປສູ່ຜູ້ໃດໂດຍທາງກົງ ແລະ ທາງອ້ອມ ທຸ່ນລະເບີດ ສັງຫານບຸກຄົນ.

ຊີ ) . ຊ່ວຍເຫລືອສະໜັບສະໜູນ ຫລື ຊຸກຍູ້ຜູ້ໃດໜຶ່ງໃຫ້ເຂົ້າກ່ຽວຂ້ອງ ກັບ ກິດຈະກຳ ເກືອດຫ້າມແກ່ ລັດພາຄີ ພາຍໃຕ້ ອະນຸສັນຍານີ້ ບໍວ່າຈະດ້ວຍວິທີໃດກໍຕາມ.

2/- ລັດພາຄີ ແຕ່ລະລັດມີພັນທະທີ່ຈະທຳລາຍ ຫລື ດຳເນີນການໃຫ້ແນໃຈວ່າມີການທຳລາຍ ທຸ່ນລະເບີດສັງຫານບຸກຄົນທັງໝົດ ໂດຍສອດຄ່ອງ ກັບ ບົດບັນຍັດຂອງອະນຸສັນຍານີ້ .

## ມາດຕາ 2
## ນິຍາມ

1. " ທຸ່ນລະເບີດສັງຫານບຸກຄົນ " ໝາຍເຖິງ ລະເບີດທີ່ໄດ້ຮັບການອອກແບບໃຫ້ລະເບີດ ເມື່ອບຸກຄົນປາກົດຕົວ ເຂົ້າໃກ້ ຫລື ສຳພັດ ແລະ ຈະທຳໃຫ້ບຸກຄົນໜຶ່ງ ຫລື ຫລາຍກວ່ານັ້ນທໍລະມານ ບາດເຈັບ ຫລື ເສັຍຊີວິດ. ທຸ່ນລະເບີດ ຊຶ່ງໄດ້ຮັບການອອກແບບໃຫ້ລະເບີດ ເມື່ອມີການປະກົດຕົວ ເຂົ້າໃກ້ ຫລື ສຳພັດໂດຍຍານພາຫະນະບໍ່ແມ່ນບຸກຄົນ ແລະ ຕິດຕັ້ງ ອຸປະກອນປ້ອງກັນການເກັບກູ້ ບໍ່ຖືວ່າເປັນທຸ່ນລະເບີດສັງຫານ ບຸກຄົນ ໂດຍຜົນຂອງການຕິດຕັ້ງຂອງອຸປະກອນດັ່ງກ່າວ .

2/ " ທຸ່ນລະເບີດ " ໝາຍເຖິງອາວຸດທີ່ໄດ້ຮັບການອອກແບບໃຫ້ຕິດຕັ້ງຢູ່ໃຕ້ ເທິງ ຫລື ໃກ້ ພື້ນດິນ ຫລື ບໍລິເວນເນື້ອທີ່ອື່ນໆ ແລະ ເພື່ອໃຫ້ລະເບີດ ເມື່ອບຸກຄົນ ຫລື ຍານພາຫະນະປະກົດຕົວ ເຂົ້າໃກ້ ຫລື ສຳພັດ.

3/- " ອຸປະກອນປ່ອງກັນການເກັບກູ້ " ໝາຍເຖິງ ອຸປະກອນທີ່ຕັ້ງໃຈທຳຂຶ້ນ ເພື່ອປົກປ້ອງທຸ່ນລະເບີດ ແລະ ເປັນສ່ວນໜຶ່ງຂອງທຸ່ນລະເບີດ ເຊິ່ງເຊື່ອມຕິດຢູ່ ຫລື ຕິດຕັ້ງຢູ່ໃຕ້ທຸ່ນລະເບີດ ແລະ ຈະທຳງານ ເມື່ອມີຄວາມພະຍາຍາມຈະຖອດຊະນວນ ຫລື ຫຍຸ້ງກ່ຽວ ກັບ ທຸ່ນລະເບີດໂດຍຕັ້ງໃຈ.

4/ " ການໂອນ " ນອກຈາກການຂົນຍ້າຍ ທຸ່ນລະເບີດສັງຫານ ບຸກຄົນ ທາງກາຍຍະພາບເຂົ້າມາ ຫລື ອອກຈາກອານາເຂດຂອງຊາດແລ້ວ ຍັງກ່ຽວຂ້ອງ ກັບ ການໂອນກຳມະສິດ ແລະ ການຄວບຄຸມ ທຸ່ນລະເບີດ ແຕ່ບໍ່ກ່ຽວຂ້ອງ ກັບ ການໂອນດິນແດນ ທີ່ມີການວາງທຸ່ນລະເບີດສັງຫານບຸກຄົນໄວ້.

5/ " ພື້ນທີ່ທຸ່ນລະເບີດ " ໝາຍເຖິງພື້ນທີ່ ເຊິ່ງເປັນອັນຕະລາຍ ອັນເນື່ອງມາຈາກການມີທຸ່ນລະເບີດ ຫລື ສົງໃສວ່າ ມີທຸ່ນລະເບີດ.

## ມາດຕາ 3
## ຂໍ້ຍົກເວັ້ນ

1/ ນອກເໜືອຈາກ ພັນທະທົ່ວໄປພາຍໃຕ້ມາດຕາທີ 1 ແລ້ວ ອະນຸຍາດໃຫ້ຈັດມ້ຽນ ຫລື ໂອນ ທຸ່ນລະເບີດສັງຫານບຸກຄົນໄດ້ຈຳນວນໜຶ່ງ ເພື່ອການພັດທະນາ ການຝຶກອົບຮົມໃນການກວດຄົ້ນ ທຸ່ນລະເບີດ ການກວາດລ້າງ ທຸ່ນລະເບີດ ຫລື ວິທີການເຕັກນິກທຳລາຍທຸ່ນລະເບີດ . ຈຳນວນຂອງກຸ່ມລະເບີດດັ່ງກ່າວ ຈະຕ້ອງ ບໍ່ເກີນຈຳນວນຕ່ຳສຸດ ທີ່ຈະເປັນຢ່າງທີ່ສຸດ ເພື່ອວັດຖຸ ປະສົງທີ່ລະບຸໄວ້ ຂ້າງເທິງ.

2/ ອານຸຍາດໃຫ້ໂອນທຸ່ນລະເບີດ ສັງຫານບຸກຄົນ ເພື່ອວັດຖຸ ປະສົງໃນການທຳລາຍ

## ມາດຕາ 4
## ການທຳລາຍທຸ່ນລະເບີດສັງຫານ ບຸກຄົນ  ທີ່ມີສະສົມໄວ້.

ຍົກເວັ້ນແຕ່ທີ່ໄດ້ລະບຸໄວ້ໃນມາດຕາ 3  . ລັດພາຄີ ຂອງແຕ່ລະລັດມີພັນທະທີ່ຈະດຳເນີນ    ການທຳລາຍ ຫລື ດຳເນີນການໃຫ້ແນ່ໃຈວ່າ ມີການທຳລາຍທຸ່ນລະເບີດ ສັງຫານ ບຸກຄົນ ທີ່ມີສະສົມໄວ້ທັງໝົດ ເຊິ່ງ ລັດພາຕີ ນັ້ນເປັນເຈົ້າຂອງ ຫລື ຄອບຄອງ ຫລື ຢູ່ໃນເຂດອຳນາດ ຫລື ການຄວບຄຸມຂອງລັດພາຄີ ນັ້ນໂດຍດ່ວນທີ່ສຸດ ແຕ່ຕ້ອງບໍ່ເກີນ 4 ປີ . ຫລັງຈາກທີ່ອະນຸສັນຍານີ້ ມີຜົນບັງຄັບໃຊ້ ສຳລັບ ລັດພາຄີນັ້ນ.

## ມາດຕາ 5
## ການທຳລາຍທຸ່ນລະເບີດ ສັງຫານບຸກຄົນໃນພື້ນທີ່ ທຸ່ນລະເບີດ.

1/        ລັດພາຄີ ແຕ່ລະລັດມີພັນທະ ທີ່ຈະດຳເນີນການທຳລາຍ ຫລື ດຳເນີນການ ໃຫ້ແນ່ໃຈວ່າ ມີການທຳລາຍ ທຸ່ນລະເບີດ ສັງຫານ ບຸກຄົນ ໃນພື້ນທີ່ທຸ່ນລະເບີດ ພາຍໃຕ້ ເຂດອຳນາດ ຫລື ການຄວບຄຸມຂອງລັດຖະບານນັ້ນໂດຍ ດ່ວນທີ່ສຸດ ແຕ່ຈະຕ້ອງບໍ່ເກີນ 10 ປີ . ຫລັງຈາກທີ່ ອານຸສັນຍາ ນີ້  ມີຜົນບັງຄັບໃຊ້ສຳລັບລັດຖະບານນັ້ນ.

2/.        ລັດຖະບານຂອງແຕ່ລະລັດຈະຕ້ອງໃຊ້ຄວາມພະຍາຍາມທຸກຢ່າງ ເພື່ອຈະສະແດງຕຳແໜ່ງ ພື້ນທີ່ພາຍໃຕ້ເຂດອຳນາດ ຫລື ການຄວບຄຸມຂອງ ລັດພາຄີນັ້ນ ຊຶ່ງຮູ້ວ່າ ຫລື ສົງໃສວ່າມີ ທຸ່ນລະເບີດ ສັງຫານ ບຸກຄົນ ແລະ ຈະຕ້ອງດຳເນີນການໃຫ້ແນ່ໃຈ ໂດຍດ່ວນທີ່ສຸດວ່າ ທຸ່ນລະເບີດ ສັງຫານ ບຸກຄົນທັງໝົດໃນພື້ນທີ່ ທຸ່ນລະເບີດ ພາຍໃຕ້ເຂດອຳນາດ ຫລື ການ ຄວບຄຸມຂອງລັດພາຄີ ນັ້ນໄດ້ຮັບການສະແດງເຂດ ບໍລິເວນ ມີການເຝົ້າຕິດຕາມ ກວດກາ ແລະ ປ້ອງກັນໂດຍໃຊ້ຮົ້ວລ້ອມ ຫລື ວິທີອື່ນໆ ເພື່ອດຳເນີນການໃຫ້ແນ່ໃຈວ່າມີການແຍກພົນລະເຮືອນ ອອກໄປຢ່າງມີປະສິດທິຜົນ ຈົນກວ່າ ທຸ່ນລະເບີດສັງຫານບຸກຄົນ  ທີ່ມີຢູ່ໃນພື້ນທີ່ນັ້ນ ຈະຖືກທຳລາຍທັງໝົດ.  ເຄື່ອງໝາຍສະແດງ ຕຳແໜ່ງ ຢ່າງໜ້ອຍ ທີ່ສຸດຈະຕ້ອງໄດ້ມາດຖານ ທີ່ກຳນົດໄວ້ໃນ ພິທີສານ ວ່າດ້ວຍການຫ້າມ ຫລື ການກຳຈັດ ການນຳໃຊ້ ທຸ່ນລະເບີດ ກັບ ລະເບີດ ແລະ ອາວຸດອື່ນໆ  ຊຶ່ງໄດ້ຮັບການດັດແກ້ໄຂເມື່ອວັນທີ 03  ພຶດສະພາ 1996 ,  ຄັດ ຊ້ອນທ້າຍກັບ ອະນຸສັນຍາ ວ່າດ້ວຍການ ຫ້າມ ຫລື ການກຳຈັດ ໃຊ້ອາວຸດຕາມແບບບາງຊະນິດ ທີ່ກໍ່ໃຫ້ເກີດການບາດເຈັບຮ້າຍແຮງມະຫາສານ ຫລື ກໍໃຫ້ເກີດຜົນໂດຍບໍ່ຈຳກັດເປົ້າໝາຍ.

3/        ຖ້າຫາກຝ່າຍລັດພາຄີ  ເຊື່ອວ່າຕົນຈະບໍ່ມີຄວາມສາມາດ ທີ່ຈະທຳລາຍ ຫລື ດຳເນີນການໃຫ້ແນ່ໃຈວ່າມີການທຳລາຍ ທຸ່ນລະເບີດສັງຫານ ບຸກຄົນ ທັງໝົດ ຕາມທີ່ໄດ້ອ້າງອີງ ໃນວັກທີ 1  ພາຍໃນລະຍະ ເວລາ ດັ່ງກ່າວ ລັດພາຄີນັ້ນອາດຈະຮ້ອງຂໍ ຕໍ່ກອງປະຊຸມ ລັດພາຄີ  ຫລື ກອງປະຊຸມ ທົບທວນ ເພື່ອຂະຫຍາຍຕໍ່ ກຳນົດເວລາ ໃນການດຳເນີນການທຳລາຍ ທຸ່ນລະເບີດສັງຫານ ບຸກຄົນ   ດັ່ງກ່າວ ໃຫ້ສຳເລັດອອກໄປເປັນລະຍະເວລາບໍ່ເກີນ 10 ປີ .

4/        ຄຳຮ້ອງຂໍແຕ່ລະຄັ້ງຈະປະກອບດ້ວຍ :

ເອ )	ໄລຍະເວລາສະເໜີ ຂໍຂະຫຍາຍຕໍ່ອອກໄປ.

ບີ )	ຄໍາອະທິບາຍ ໂດຍລະອຽດ ກ່ຽວກັບເຫດຜົນ ຂອງການຂະຫຍາຍຕໍ່ເວລາ ທີ່ສະເໜີ ເຊິ່ງ ລວມ ເຖິງ .

(1)	ການກະກຽມ ແລະ ສະຖານະການ ຂອງວຽກງານ ທີ່ຖືກດໍາເນີນການພາຍໃຕ້ ໂຄງການ ລະດັບຊາດ ໃນການກວາດລ້າງທຸ່ນລະເບີດ,

(2)	ວິທີການ ດ້ານເຕັກນິກ ແລະ ດ້ານການເງິນທີ່ລັດພາຄີນໍາມາໃຊ້ໄດ້ໃນການ ທໍາລາຍທຸ່ນລະເບີດສັງຫານບຸກຄົນທັງໝົດ ແລະ

(3)	ພຶດຕິການທີ່ຂັດຂວາງຄວາມສາມາດຂອງລັດພາຄີ  ທີ່ຈະທໍາລາຍ ທຸ່ນລະເບີດ ສັງຫານ ບຸກຄົນທັງໝົດໃນພື້ນທີ່ທຸ່ນລະເບີດ.

ຊີ )	ຜົນກະທົບ ດ້ານມະນຸດສະທໍາ ສັງຄົມ ເສດຖະກິດ ແລະ ສິ່ງແວດລ້ອມຂອງການຂະຫຍາຍຕໍ່ເວລາ ແລະ.

ດີ )	ຂໍ້ມູນຂ່າວສານ ອື່ນໆ ໃດທີ່ກ່ຽວຂ້ອງ ກັບ ຄໍາຮ້ອງຂໍໃນການຂະຫຍາຍຕໍ່ເວລາ

5)	ທີ່ປະຊຸມລັດພາຄີ  ຫລື ທີ່ປະຊຸມ ທົບທວນຈະປະເມີນຄວາມຄໍາຮ້ອງຂໍ ແລະ ວິໃຈ ໂດຍ ຄະແນນສຽງສ່ວນຫລາຍຂອງລັດພາຄີ ທີ່ມາປະຊຸມ ແລະ ລົງຄະແນນສຽງ ວ່າຈະອະນຸມັດ ຄໍາຮ້ອງ ຂໍ ຂະຫຍາຍ ຕໍ່  ເວລາ ຫລື ບໍ່ ໂດຍພິຈາລະນາ ປັດໃຈຕ່າງໆ ຕາມວັກ 4 .

6).	ການຂະຫຍາຍຕໍ່ເວລາດັ່ງກ່າວອາດຂະຫຍາຍຕໍ່ໄດ້ອີກໂດຍການມີຄໍາຮ້ອງຂໍໃໝ່ຕາມວັກ 3,4 ແລະ 5ຂອງມາດຕານີ້ .  ໃນການຮ້ອງຂໍຂະຫຍາຍເວລາຕໍ່ໄປອີກ ລັດພາຄີຈະຕ້ອງ ຍືນຂໍ້ມູນ ທີ່ກ່ຽວຂ້ອງ ເພີ້ມເຕີມ ກ່ຽວກັບ ສິ່ງທີ່ໄດ້ດໍາເນີນການໄປແລ້ວໃນຊ່ວງເວລາທີ່ໄດ້ຂະຫຍາຍຄັ້ງກ່ອນ ຕາມມາດຕານີ້ .

## ມາດຕາ 6
## ຄວາມຮ່ວມມື ແລະ ຄວາມຊ່ວຍເຫລືອ ລະຫວ່າງ ປະເທດ

1)	ໃນການປະຕິບັດພັນທະພາຍໃຕ້ອານຸສັນຍານີ້ ລັດພາຄີ ແຕ່ລະລັດ ມີສິດທິສະແຫວງຫາ ຫລື ຮັບຄວາມຊ່ວຍເຫລືອໃນສ່ວນທີ່ທໍາໄດ້ຈາກລັດພາຄີອື່ນໆ ເທົ່າທີ່ເປັນໄປໄດ້.

2)	ລັດພາຄີແຕ່ລະລັດມີພັນທະທີ່ຈະອໍານວຍຄວາມສະດວກ  ແລະ ມີສິດທິ  ທີ່ຈະເຂົ້າຮ່ວມຢ່າງເຕັມທີເທົ່າທີ່ເປັນໄປໄດ້ໃນການແລກປ່ຽນ ອຸປະກອນ, ວັດສະດຸ ແລະ  ຂໍ້ມູນ ດ້ານເຕັກໂນໂລຊີ ແລະ ວິທະຍາສາດ ກ່ຽວກັບ ການຈັດຕັ້ງ ປະຕິບັດ ອະນຸສັນຍານີ້.   ລັດພາຄີ ຈະບໍ່ກໍານົດ ຂໍ້ຈໍາກັດທີ່ບໍ່ສົມຄວນຕໍ່ການ ຈັດຫາ ອຸປະກອນ ກວາດລ້າງ ທຸ່ນລະເບີດ ແລະ ຂໍ້ມູນຂ່າວສານ ດ້ານເຕັກ ໂນໂລຢີ ທີ່ກ່ຽວຂ້ອງ ເພື່ອ ຈຸດປະສົງເປົ້າໝາຍ ດ້ານມະນຸດສະທໍາ .

3). ລັດພາຄີ ແຕ່ລະລັດ ທີ່ຢູ່ໃນຖານະທີ່ທຳໄດ້ ຈະໃຫ້ຄວາມຊ່ວຍເຫລືອໃນການເອົາໃຈໃສ່ ແລະ ຟື້ນ ຟູໃຫ້ ກັບ ສູ່ສະພາບເດີມ ລວມທັງການ ກັບ ເຂົ້າຮ່ວມ ລະບົບສັງຄົມ ແລະ ເສດຖະກິດຂອງຜູ້ປະສົບໄພ ທຸ່ນລະເບີດ ແລະ ຕໍ່ໂຄງການໃຫ້ຄວາມຮູ້ກ່ຽວກັບໄພຂອງທຸ່ນລະເບີດ. ຄວາມຊ່ວຍເຫລືອດັ່ງກ່າວອາດໃຫ້ຜ່ານລະບົບຂອງສະຫະປະຊາຊາດ ອົງການ ຫລື ສະຖາບັນ ລະຫວ່າງ ປະເທດລະດັບ ພູມີພາກ ຫລື ລະດັບຊາດ ຄະນະກຳມາການກາຊາດ ລະຫວ່າງປະເທດ ສະພາກາຊາດ ແລະ ສະພາຊີກ ວົງເດືອນ ແດງ ໃນລະດັບປະເທດ ແລະ ສະຫະພັນ ລະຫວ່າງປະເທດ ຂອງສະພາກາຊາດ ແລະ ສະພາຊີກວົງເດືອນແດງ ອົງການ ທີ່ບໍ່ຂື້ນ ກັບ ລັດຖະບານ ຫລື ໃນ ລະດັບທະວິບພາຄີເປັນຕົ້ນ.

4). ລັດຖະບານແຕ່ລະລັດ ທີ່ຢູ່ໃນຖານະທີ່ທຳໄດ້ ຈະໃຫ້ຄວາມຊ່ວຍເຫລືອໃນການກວາດລ້າງ ທຸ່ນລະເບີດ ແລະ ກິດຈະກຳທີ່ກ່ຽວຂ້ອງ . ຄວາມຊ່ວຍເຫລືອ ດັ່ງກ່າວ ອາດໃຫ້ຜ່ານລະບົບຂອງ ສະຫະປະ ຊາຊາດ ອົງການ ຫລື ສະຖາບັນ ລະຫວ່າງ ປະເທດ ຫລື ລະດັບ ພູມີພາກ ອົງການ ຫລື ສະຖາບັນທີ່ບໍ່ຂື້ນ ກັບ ລັດຖະບານ ຫລື ໃນລະດັບ ທະວິບພາຄີ ຫລື ໂດຍການບໍລິຈາກ ສົມທົບກອງທຶນ ໂດຍສະມັກໃຈຂອງສະຫະປະຊາຊາດ ເພື່ອຄວາມຊ່ວຍເຫລືອໃນການກວາດລ້າງທຸ່ນລະເບີດ ຫລື ກອງທຶນລະດັບພູມີພາກອື່ນໆ ທີ່ກ່ຽວຂ້ອງກັບ ການເກັບກູ້ທຸ່ນລະເບີດ

5). ລັດພາຄີແຕ່ລະລັດ ທີ່ຢູ່ໃນຖານະທີ່ທຳໄດ້ ຈະໃຫ້ຄວາມຊ່ວຍເຫລືອໃນການທຳລາຍ ທຸ່ນລະເບີດສັງຫານ ບຸກຄົນ ທີ່ມີສະສົມໄວ້.

6). ລັດຖະບານແຕ່ລະລັດ ມີພັນທະສະໜອງຂໍ້ມູນຂ່າວສານ ແກ່ຖານຂໍ້ມູນກ່ຽວກັບ ການກວາດລ້າງທຸ່ນລະເບີດ ຊຶ່ງຈັດຕັ້ງຂື້ນພາຍໃນ ລະບົບຂອງສະຫະປະຊາຊາດໂດຍສະເພາະ ຂໍ້ມູນ ຂ່າວສານ ກ່ຽວກັບ ວິທີການ ແລະ ເຕັກໂນໂລຢີຕ່າງໆ ໃນການກວາດລ້າງ ທຸ່ນລະເບີດ ແລະ ລາຍຊື່ ຜູ້ຊ່ຽວຊານ, ໜ່ວຍງານ ຊ່ຽວຊານ ຫລື ຈຸດປະສານງານລະດັບຊາດ ໃນການກວາດລ້າງທຸ່ນລະເບີດ.

7). ລັດພາຄີ ອາດຈະຮ້ອງຂໍໃຫ້ສາຫະປະຊາຊາດ , ອົງການລະດັບພູມີພາກ , ລັດພາຄີອື່ນໆ ຫລືທີ່ປະຊຸມລະຫວ່າງ ລັດຖະບານ ທີ່ມີອຳນາດ ຫລື ທີ່ປະຊຸມ ທີ່ບໍ່ຂື້ນ ກັບ ລັດຖະບານເພື່ອຊ່ວຍເຫລືອ ເຈົ້າໜ້າທີ່ຂອງລັດນັ້ນໃນການຈັດທຳໂຄງການ ເກັບກູ້ ທຸ່ນລະເບີດລະດັບຊາດເພື່ອກຳນົດເລື່ອງຕ່າງໆເຊັ່ນ :

ເອ) . ລະດັບ ແລະ ຂອບເຂດຂອງບັນຫາ ທຸ່ນລະເບີດສັງຫານ ບຸກຄົນ.

ບີ ). ແຫລ່ງເງິນທຶນ ຊັບພະຍາກອນດ້ານເຕັກໂນໂລຢີ ແລະ ຊັບພະຍາກອນມະນຸດ ທີ່ຈຳເປັນ ສຳລັບການຈັດຕັ້ງປະຕິບັດໂຄງການ.

ຊີ ). ປະເມີນຈຳນວນປີທີ່ຈຳເປັນໃນການທຳລາຍທຸ່ນລະເບີດສັງຫານ ບຸກຄົນທັງໝົດ ໃນພື້ນທີ່ທຸ່ນລະເບີດພາຍໃຕ້ເຂດອຳນາດ ຫລື ການຄວບຄຸມຂອງລັດພາຄີ ທີ່ກ່ຽວຂ້ອງ

ດີ ) ກິດຈະກຳການໃຫ້ຄວາມຮູ້ກ່ຽວກັບ ໄພຂອງທຸ່ນລະເບີດ ເພື່ອລຸດຜ່ອນຈຳນວນການບາດເຈັບ ຫລື ເສັຍຊີວິດ ທີ່ກ່ຽວກັບ ທຸ່ນລະເບີດ.

ອີ) ຄວາມຊ່ວຍເຫລືອແກ່ຜູ້ປະສົບໄພ ທຸ່ນລະເບີດ

ເອຟ) ຄວາມສຳພັນລະຫວ່າງ ລັດຖະບານຂອງ ລັດພາຄີ ທີ່ກ່ຽວຂ້ອງ ແລະ ອົງການລັດຖະບານ. ລະຫວ່າງ ລັດຖະບານ ຫລື ທີ່ບໍ່ຂື້ນ ກັບ ລັດຖະບານ ທີ່ກ່ຽວຂ້ອງ ຊຶ່ງຈະດຳເນີນການຈັດຕັ້ງປະຕິບັດໂຄງການ.

8). ລັດພາຄີແຕ່ລະລັດທີ່ໄດ້ ແລະ ຮັບການຊ່ວຍເຫລືອພາຍໃຕ້ບົດບັນຍັດຂອງມາດຕານີ້ ຈະໃຫ້ຄວາມຮ່ວມມື ເພື່ອດຳເນີນການໃຫ້ແນ່ໃຈວ່າຈະຈັດຕັ້ງປະຕິບັດໂຄງການ ຊ່ວຍເຫລືອ ທີ່ຕົກລົງ ກັນຢ່າງ ເຕັມທີ ແລະ ໂດຍດ່ວນ.

## ມາດຕາ 7
## ມາດຕະການດ້ານຄວາມປ່ອງໃສ

1. ລັດພາຄີ .ແຕ່ລະລັດຈະລາຍງານ ຕໍ່ ເລຂາ ທິການ ສະຫະປະຊາຊາດ ໂດຍດ່ວຍທີ່ສຸດ ເທົ່າທີ່ຈະທຳໄດ້ ແລະ ບໍ່ວ່າໃນກໍລະນີໃດພາຍໃນເວລາ ບໍ່ເກີນ 180 ວັນ ຫລັງຈາກມີການ ມີຜົນບັງຄັບໃຊ້ຂອງອະນຸສັນຍາສຳລັບ ລັດພາຄີ ນີ້ໃນເລື່ອງດັ່ງນີ້ :

ເອ ) ມາດຕະການຈັດຕັ້ງປະຕິບັດອະນຸສັນຍາໃນລະດັບຊາດ ທີ່ອ້າງອີງໃນມາດຕາ 9 .

ບີ ) ຈຳນວນທຸ່ນລະເບີດສັງຫານ ບຸກຄົນທັງໝົດທີ່ ລັດພາຄີ ເປັນເຈົ້າຂອງ ຫລື ຄອບຄອງ ຫລື ພາຍໃຕ້ເຂດອຳນາດ ຫລື ການຄວບຄຸມຂອງ. ລັດພາຄີ ນັ້ນ ໂດຍໃຫ້ລວມ ເຖິງ ການ ແບ່ງໝວດໝູ່ຂອງຊະນິດ ປະລິມານ ແລະ ຫາກເປັນໄປໄດ້ ໝາຍເລກລະຫັດ ຂອງທຸ່ນລະເບີດສັງຫານບຸກຄົນ ແຕ່ລະຊະນິດໄດ້ສະສົມໄວ້.

ຊີ ) ທີ່ຕັ້ງຂອງເນື້ອທີ່ ທຸ່ນລະເບີດ ທີ່ມີ ຫລື ສົງໃສວ່າຈະມີທຸ່ນລະເບີດສັງຫານ ບຸກຄົນພາຍໃຕ້ເຂດອຳນາດ ຫລື ການຄວບຄຸມຂອງ. ລັດພາຄີ ນັ້ນເທົ່າທີ່ຈະທຳໄດ້ໂດຍໃຫ້ລວມ ເຖິງ ລາຍລະອຽດໃຫ້ຫລາຍທີ່ສຸດ ກ່ຽວກັບ ຊະນິດ ແລະ ປະລິມານຂອງທຸ່ນລະເບີດ ສັງຫານ ບຸກຄົນ ໃນແຕ່ລະຊະນິດທີ່ມີຢູ່ໃນເນື້ອທີ່ທຸ່ນລະເບີດແຕ່ລະແຫ່ງ ແລະ ເວລາ ທີ່ໄດ້ວາງ ທຸ່ນລະເບີດໄວ້.

ດີ). ຊະນິດປະລິມານ ແລະ ຫາກເປັນໄປໄດ້ ໝາຍເລກລະຫັດ ຂອງທຸ່ນລະເບີດສັງຫານບຸກຄົນທັງໝົດ ທີ່ຈັດມ້ຽນ ຫລື ໂອນສຳລັບການພັດທະນາ ແລະ ການຝຶກອົບຮົມເຕັກນິກໃນການກວດຄົ້ນທຸ່ນລະເບີດການກວາດລ້າງ ທຸ່ນລະເບີດ ຫລື ການທຳລາຍທຸ່ນລະເບີດ ຫລື ການໂອນ ເພື່ອວັດຖຸປະສົງໃນ ການທຳລາຍ ລວມທັງສະຖາບັນທີ່ໄດ້ຮັບອະນຸຍາດຈາກ ລັດພະຄີ ໃຫ້ຈັດມ້ຽນ ຫລື ໂອນທຸ່ນລະເບີດ ສັງຫານບຸກຄົນ ໂດຍສອດຄ່ອງ ກັບ ມາດຕາ 3.

ອີ). ສະຖານະການ ຂອງໂຄງການດັດແປງ ຫລື ປິດປະຈຳການ ສິ່ງທີ່ອຳນວຍຄວາມສະດວກໃນການຜະລິດທຸ່ນ ລະເບີດ ສັງຫານບຸກຄົນ.

ເອຟ). ສະຖານການ ຂອງໂຄງການ ທຳລາຍທຸ່ນລະເບີດສັງຫານບຸກຄົນຕາມມາຕ 4 ແລະ 5 ລວມທັງລາຍ ລະອຽດ ທີ່ກ່ຽວ ກັບ ວິທີ ຊຶ່ງຈະໃຊ້ໃນການທຳລາຍ ທີ່ຕັ້ງຂອງສະຖານທີ ທີ່ຈະໃຊ້ໃນການທຳລາຍ ແລະ ມາດຕະຖານ ດ້ານຄວາມປອດໄພ ແລະ ສິ່ງແວດລ້ອມທີ່ໃຊ້ຢູ່ ແລະ ທີ່ຈະຢຶດຖື.

ຈີ).	ຊະນິດ ແລະ ປະລິມານຂອງທຸ່ນລະເບີດສັງຫານບຸກຄົນ ທີ່ ຖືກທຳລາຍຫລັງຈາກການມີຜົນບັງຄັບໃຊ້ຂອງອະນຸສັນຍານີ້ ສຳລັບ ລັດພາຄີນັ້ນ , ໂດຍໃຫ້ລວມ ເຖິງ ການແບ່ງໝວດໝູ່ຂອງ ປະລິມານທຸ່ນລະເບີດສັງຫານ ບຸກຄົນຂອງແຕ່ລະຊະນິດ ທີ່ຖືກທຳລາຍຕາມມາດຕາ 4 ແລະ 5 ຕາມລະດັບ ແລະ ຫາກເປັນໄປໄດ້ພ້ອມດ້ວຍເລກໝາຍລະຫັດຂອງທຸ່ນລະເບີດສັງຫານ ບຸກຄົນຂອງແຕ່ລະຊະນິດໃນກໍລະນີຂອງການທຳລາຍໂດຍສອດຄ່ອງ ກັບ ມາດຕາ 4 .

ເອຊ)	ຄຸນລັກສະນະເຕັກນິກຂອງທຸ່ນລະເບີດສັງຫານບຸກຄົນໃນແຕ່ລະຊະນິດທີ່ຜະລິດ ຂຶ້ນເທົ່າທີ່ຮູ້ຈັກ ແລະ ທຸ່ນລະເບີດທີ່ລັດພາຄີ ເປັນເຈົ້າຂອງ ຫລື ຄອບຄອງໃນຂະນະນີ້ໂດຍ ເມື່ອເປັນໄປໄດ້ໂດຍສົມເຫດ ສົມຜົນ ໃຫ້ຂໍ້ມູນຂ່າວສານປະເພດທີ່ອາດອຳນວຍຄວາມສະດວກຕໍ່ການສະແດງຕຳແໜ່ງ ແລະ ການກວາດກູ້ ທຸ່ນລະເບີດສັງຫານບຸກຄົນ ໂດຍຂໍ້ມູນຂ່າວສານນີ້ ຢ່າງນ້ອຍສຸດ ຈະ ຕ້ອງລວມ ເຖິງ ຂະໜາດ,ການຈູດຊະນວນ , ອົງປະກອບຂອງວັດຖຸລະເບີດ, ອົງປະກອບໂລຫະ ພາບສີ ແລະ ຂໍ້ມູນຂ່າວສານອື່ນໆ. ທີ່ອາດອຳນວຍຄວາມສະດວກຕໍ່ການກວາດລ້າງທຸ່ນລະເບີດ ແລະ .

ໄອ)	ມາດຕະການທີ່ກຳນົດສຳລັບການແຈ້ງເຕືອນໄພ ໂດຍທັນທີ ແລະ ມີປະສິດທິພາບຕໍ່ປະຊາກອນໃນເນື້ອທີ່ທັງໝົດທີ່ໄດ້ສະແດງຕຳແໜ່ງໄວ້ໃນວັກ 2 ຂອງມາດຕາ 5 .

2.	ລັດພາຄີ ຈະຕ້ອງປັບປຸງຂໍ້ມູນຂ່າວສານທີ່ໃຫ້ຕາມນີ້ ໃຫ້ທັນສະໄໝທຸກປີ ໂດຍຄອບຄຸມປີ ປະຕິທິນທີ່ຜ່ານມາ ແລະ ຈະຕ້ອງລາຍງານ ຂໍ້ມູນຂ່າວສານ ດັ່ງກ່າວ ຕໍ່ ເລຂາ ທິການ ສະຫະປະຊາຊາດບໍ່ເກີນ ວັນທີ 30 ເມສາຂອງແຕ່ລະປີ .

3.	ເລຂາທິການສະຫະປະຊາຊາດ ຈະສົ່ງລາຍງານ ດັ່ງກ່າວທັງໝົດໄປຍັງ ລັດພາຄີ .

## ມາດຕາ 8
## ການອຳນວຍຄວາມສະດວກ ແລະ ໃຫ້ຄວາມ ກະຈ່າງຕໍ່ການປະຕິບັດພັນທະໜ້າທີ່

1. ລັດພາຄີຕົກລົງທີ່ປຶກສາ ຫາລື ແລະ ຮ່ວມມື ກັນກ່ຽວກັບ ການຈັດຕັ້ງປະຕິບັດ ບົດບັນຍັດຂອງ ອະນຸສັນຍານີ້ ແລະ ດຳເນີນ ງານຮ່ວມ ກັນ ດ້ວຍ ເຈດຕະນາຂອງຄວາມຮ່ວມມື ເພື່ອອຳນວຍຄວາມສະດວກໃຫ້ລັດພາຄີ ປະຕິບັດພັນທະຂອງຕົນພາຍໃຕ້ ອະນຸສັນຍານີ້ .

2. ຖ້າຫາກ ລັດພາຄີ ໜຶ່ງລັດ ຫລື ຫລາຍກວ່າ ມີຈຸດປະສົງ ຈະຂໍຄວາມກະຈ່າງແຈ້ງ ແລະ ຂໍໃຫ້ແກ້ໄຂບັນຫາກ່ຽວກັບ ການປະຕິບັດບົດບັນຍັດຂອງອະນຸສັນຍານີ້ໂດຍ ລັດພາຄີ ອີກລັດໜຶ່ງ. ລັດພາຄີ ແມ່ນໂຕນີ້ ນັ້ນອາດຮ້ອງຂໍຄວາມກະຈ່າງແຈ້ງໃນເລື່ອງ ດັ່ງກ່າວໄປຫາ ລັດພາຄີ ອີກລັດໜຶ່ງໂດຍຜ່ານເລຂາສະຫະປະຊາຊາດ . ຄຳຮ້ອງຂໍດັ່ງກ່າວຈະຕ້ອງປະກອບດ້ວຍ ຂໍ້ມູນຂ່າວສານທີ່ເໝາະສົມທັງໝົດລັດພາຄີ ແຕ່ລະລັດຈະຕ້ອງລະເວັ້ນ ຈາກການຮ້ອງຂໍຄວາມກະຈ່າງແຈ້ງທີ່ປາສະຈາກເຫດຜົນ ໂດຍໃຊ້ຄວາມລະວັງ ເພື່ອຫລີກລ້ຽງການໃຊ້ໄປໃນທາງທີ່ຜິດ ລັດພາຄີ ໜຶ່ງທີ່ໄດ້ຮັບການຮ້ອງຂໍຄວາມກະຈ່າງແຈ້ງ ຈະຕ້ອງຈັດຫາຂໍ້ມູນຂ່າວສານທັງໝົດທີ່ຊ່ວຍເຫລືອໃຫ້ມີຄວາມກະຈ່າງແຈ້ງໃນເລື່ອງນີ້ ໃຫ້ແກ່ ລັກພາຄີ ທີ່ຮ້ອງຂໍພາຍໃນ 28 ວັນ ໂດຍຜ່ານ ເລຂາ ທິການສະຫະປະຊາຊາດ .

3. ຖ້າຫາກ ລັດພາຄີ ທີ່ຮ້ອງຂໍບໍ່ໄດ້ຮັບຄຳຕອບໂດຍຜ່ານ ເລຂາທິການ ສະຫະປະຊາຊາດພາຍໃນໄລຍະເວລາດັ່ງກ່າວ ຫລື ເຫັນວ່າ ຄຳຕອບຕໍ່ການຮ້ອງຂໍຄວາມກະຈ່າງແຈ້ງຍັງບໍ່ເປັນທີ່ພໍໃຈ. ລັດພາຄີ ນັ້ນອາດສະເໜີເລື້ອງບັນຫາ ດັ່ງກ່າວໂດຍຜ່ານເລຂາສະຫະປະຊາຊາດເຂົ້າສູ່ກອງປະຊຸມ ລັດພາຄີ ຄັ້ງຕໍ່ໄປ. ເລຂາທິການສະຫະປະຊາຊາດຈະສົ່ງເລື້ອງບັນຫາດັ່ງກ່າວພ້ອມ ທັງຂໍ້ມູນຂ່າວສານ ທີ່ເໝາະສົມທັງໝົດ ກ່ຽວກັບ ການຮ້ອງຂໍຄວາມກະຈ່າງແຈ້ງໄປຍັງ ລັດພາຄີ ທັງໝົດ. ຂໍ້ມູນຂ່າວສານທັງໝົດເຫລົ່ານີ້ຈະຕ້ອງສົ່ງໄປຍັງ ລັດພາຄີ ທີ່ໄດ້ຮັບການຮ້ອງຂໍ ຊຶ່ງມີສິດທິ ທີ່ຈະຕອບໂຕ້ໄດ້.

4. ໃນລະຫວ່າງ ທີ່ລໍການຈັດກອງປະຊຸມ ລັດພາຄີ ຄັ້ງໃດ ລັດພາຄີ ໃດທີ່ກ່ຽວຂ້ອງອາດຮ້ອງຂໍໃຫ້ ເລຂາທິການສະຫະປະຊາຊາດເປັນຜູ້ຮັບຕິດຕໍ່ ເພື່ອອຳນວຍຄວາມສະດວກຕໍ່ການໃຫ້ຄວາມ ກະຈ່າງແຈ້ງ ທີ່ຮ້ອງຂໍ.

5. ລັດພາຄີ ທີ່ຮ້ອງຂໍອາດສະເໜີ ໂດຍຜ່ານເລຂາທິການ ສະຫະປະຊາຊາດ ໃຫ້ ຈັດກອງປະຊຸມ ລັດພາຄີ ສະໄໝ ພິເສດ ເພື່ອພິຈາລະນາ ເລື້ອງ ບັນຫາດັ່ງກ່າວ . ເລຂາທິການ ສະຫະປະຊາຊາດຈະແຈ້ງ ຂໍ້ສະເໜີນີ້ ແລະ ຂໍ້ມູນ ຂ່າວສານທັງໝົດ ທີ່ໄດ້ຮັບຈາກ ລັດພາຄີ ທີ່ກ່ຽວຂ້ອງໄປຍັງ ລັດພາຄີ ທັງໝົດ ໂດຍຮ້ອງຂໍໃຫ້ລັດພາຄີ ທັງໝົດແຈ້ງວ່າຈະເຫັນດີໃຫ້ຈັດກອງປະຊຸມລັດພາຄີ ສະໄມພິເສດ ຫລື ບໍ ເພື່ອວັດຖຸປະສົງໃນການ ພິຈາລະນາ ເລື້ອງດັ່ງກ່າວ. ໃນກໍລະນີທີ່ ລັດພາຄີ ຈຳນວນໜຶ່ງໃນສາມເປັນຢ່າງໜ້ອຍເຫັນດີຈັດກອງປະຊຸມສະໄໝ ພິເສດດັ່ງກ່າວພາຍໃນ 14 ວັນ ຫລັງຈາກວັນທີ່ແຈ້ງດັ່ງກ່າວ ເລຂາທິການຈະຈັດກອງປະຊຸມ ລັດພາຄີ ພິເສດພາຍໃນ 14 ວັນຕໍ່ໄປ . ການປະຊຸມນີ້ຈະຖືວ່າຄົບຄະນະ ເມື່ອມີ ລັດພາຄີ ຈຳນວນຂ້ອນຂ້າງຫລາຍເຂົ້າຮ່ວມ.

6. ທີ່ປະຊຸມ ລັດພາຄີ ຫລື ທີ່ປະຊຸມ ລັດພາຄີ ສະໄໝພິເສດແລ້ວແຕ່ກໍລະນີຈະກຳນົດໃນເບື້ອງຕົ້ນວ່າ ຈະພິຈາລະນາເລື້ອງດັ່ງກ່າວຕໍ່ໄປ ຫລື ບໍ ໂດຍຄຳນຶ່ງ ເຖິງ ຂໍ້ມູນຂ່າວສານທັງໝົດທີ່ສະເໜີຂຶ້ນໂດຍລັດພາຄີ ທີ່ກ່ຽວຂ້ອງ. ທີ່ປະຊຸມ ລັດພາຄີ ຫລື ທີ່ປະຊຸມ ລັດພາຄີ ສະໄໝພິເສດຈະພະຍາຍາມທຸກວິທີທາງບັນລຸ ຂໍ້ຕັດສິນໃຈ ໂດຍການ ຕົກລົງ ຖ້າຫາກໄດ້ພະຍາຍາມທຸກວິທີທາງດັ່ງກ່າວແລ້ວແຕ່ບໍ່ສາມາດ ຕົກ ລົງ ກັນໄດ້, ທີ່ປະຊຸມຈະ ຕັດສິນໂດຍສຽງສ່ວນຫລາຍຂອງ ລັດພາຄີ ທີ່ມາປະຊຸມ ແລະ ການອອກສຽງ .

7. ລັດພາຄີ ທັງໝົດຈະຮ່ວມມືຢ່າງເຕັມທີ່ ກັບ ກອງປະຊຸມລັດພາຄີ ສະໄໝ ພິເສດໃນການດຳເນີນການທົບທວນເລື້ອງດັ່ງກ່າວ, ລວມທັງຄະນະກວດສອບຂໍ້ແທ້ຈິງໃດໆ ຊຶ່ງໄດ້ຮັບມອບໝາຍໜ້າທີ່ຕາມວັກທີ 8.

8. ຖ້າຫາກຈຳເປັນຕ້ອງໄດ້ຮັບຄວາມກະຈ່າງແຈ້ງເພີ້ມເຕີມ, ທີ່ປະຊຸມ ລັດພາຄີ ຫລື ທີ່ປະຊຸມ ລັດພາຄີ ສະໄໝ ພິເສດຈະອະນຸມັດໃຫ້ສົ່ງຄະນະກວດສອບ ຂໍ້ແທ້ຈິງ ແລະ ກຳນົດອຳນາດໜ້າທີ່ຂອງຄະນະກວດສອບຂໍ້ແທ້ຈິງດັ່ງກ່າວ ໂດຍສຽງສ່ວນຫລາຍຂອງ ລັດພາຄີ ທີ່ມາປະຊຸມ ແລະ ລົງຄະແນນສຽງ . ໃນ ເວລາໃດກໍໄດ້ລັດພາຄີ ທີ່ໄດ້ຮັບການຮ້ອງຂໍອາດເຊີນຄະນະກວດສອບຂໍ້ແທ້ຈິງເຂົ້າໃນອານາເຂດຂອງ ລັດພາຄີ ນັ້ນໄດ້ . ຄະນະດັ່ງກ່າວຈະປະຕິບັດພາລະກິດຂອງຕົນ ໂດຍບໍ່ຕ້ອງໃຫ້ທີ່ປະຊຸມ ລັດພາຄີ ຫລື ທີ່ປະຊຸມ ລັດພາຄີ ສະໄໝພິເສດຕົກລົງອານຸມັດ ການປະຕິບັດງານ ດັ່ງກ່າວ . ຄະນະດັ່ງກ່າວປະກອບດ້ວຍ ຜູ້ຊ່ຽວຊານບໍ່ເກີນ 9 ຄົນ ຊຶ່ງຖືກແຕ່ງຕັ້ງຂຶ້ນ ແລະ ໄດ້ຮັບຄວາມເຫັນດີ ເຫັນຊອບຕາມວັກ 9 ແລະ 10 ອາດເກັບຂໍ້ມູນຂ່າວສານເພີ່ມເຕີມ ໃນພື້ນທີ່ ຫລື ສະຖານທີ່ອື່ນໆ ທີ່ກ່ຽວຂ້ອງໂດຍກົງ ກັບ ປະເດັນການປະຕິບັດຕາມອະນຸ

ສັນຍາ ທີ່ມີການກ່າວອ້າງ ແລະ ຢູ່ພາຍໃຕ້ເຂດອຳນາດ ຫລື ການຄວບຄຸມຂອງ ລັດພາຄີ ທີ່ໄດ້ຮັບການຮ້ອງຂໍ.

9. ເລຂາທິການ ສະຫະປະຊາຊາດຈະກຽມບັນຊີລາຍຊື່ ສັນຊາດ ແລະ ຂໍ້ມູນອື່ນໆ ທີ່ກ່ຽວຂ້ອງຂອງຜູ້ຊ່ຽວຊານທີ່ມີ ຄຸນສົມບັດຄວາມສາມາດທີ່ເໝາະສົມ ຊຶ່ງຖືກຈັດຫາໃຫ້ໂດຍບັນດາ.ລັດພາຄີ ແລະ ສົ່ງບັນຊີດັ່ງກ່າວ ໃຫ້ແກ່ບັນດາ ລັດພາຄີ ທັງໝົດລວມທັງປັບປຸງບັນຊີດັ່ງກ່າວ ໃຫ້ທັນສະໄໝ. ຜູ້ຊ່ຽວຊານທີ່ຢູ່ໃນບັນຊີນີ້ ຈະຖືວ່າໄດ້ຮັບແຕ່ງຕັ້ງສຳລັບການກວດສອບຂໍ້ແທ້ຈິງທັງໝົດ ເວັ້ນເສັຍແຕ່ ລັດພາຄີ ນຶ່ງປະກາດບໍ່ຍອມຮັບເປັນລາຍລັກອັກສອນ. ໃນກໍລະນີບໍ່ຍອມຮັບ ແລະ ຖ້າຫາກການປະກາດບໍ່ຍອມຮັບນັ້ນຖືກທຳກ່ອນການແຕ່ງຕັ້ງ ຜູ້ຊ່ຽວຊານ ສຳລັບການກວດສອບ ຂໍ້ແທ້ຈິງ ດັ່ງກ່າວຜູ້ຊ່ຽວຊານດັ່ງກ່າວຈະບໍ່ເຂົ້າຮ່ວມໃນການກວດສອບ ຂໍ້ແທ້ຈິງໃນອານາເຂດ ຫລື ໃນສະຖານທີ່ອື່ນໃດ ທີ່ຢູ່ພາຍໃຕ້ເຂດອຳນາດ ຫລື ການຄວບຄຸມຂອງລັດທີ່ຕັດຄ້ານ.

10. ເມື່ອໄດ້ຮັບການຮ້ອງຂໍຈາກທີ່ປະຊຸມ ລັດພາຄີ ຫລື ທີ່ປະຊຸມ ລັດພາຄີ ສະໄໝພິເສດ ເລຂາທິການສະຫະປະຊາຊາດຈະແຕ່ງຕັ້ງ ສະມາຂອງຄະນະກວດສອບຂໍແທ້ຈິງລວມທັງຫົວໜ້າຄະນະ ຫລັງຈາກທີໄດ້ປຶກສາຫາລື ກັບ ລັດພາຄີ ທີ່ໄດ້ຮັບການຮ້ອງຂໍ. ຄົນສັນຊາດຂອງ ລັດພາຄີ ທີ່ຮ້ອງຂໍໃຫ້ມີຄະນະກວດສອບຂໍ້ແທ້ຈິງ ຫລື ຄົນສັນຊາດຂອງລັດທີ່ກ່ຽວຂ້ອງໂດຍກົງ ກັບການຮ້ອງ ຂໍຈະບໍ່ໄດ້ຮັບການແຕ່ງຕັ້ງໃຫ້ຢູ່ໃນຄະນະກວດສອບຂໍ້ແທ້ຈິງ. ສະມາຊິກຂອງຄະນະກວດສອບ ຂໍ້ແທ້ຈິງຈະໄດ້ຮັບເອກະສິດ ແລະ ຄວາມຄຸ້ມກັນພາຍໃຕ້ມາດຕາ 6 ຂອງ ອະນຸສັນຍາວ່າດ້ວຍເອກະສິດ ແລະ ຄວາມຄຸ້ມກັນ ຂອງສະຫະປະຊາດ ທີ່ຖືກຮັບຮອງເອົາເມື່ອວັນທີ 13 ກຸມພາ 1946.

11. ສະມາຊິກຂອງຄະນະກວດສອບ ຂໍ້ແທ້ຈິງຈະເດີນທາງ ເຖິງ ດິນແດນຂອງ ລັດພາຄີ ທີ່ໄດ້ຮັບການຮ້ອງ ຂໍໃນໂອກາດທຳອິດ ໂດຍແຈ້ງລ່ວງໜ້າຢ່າງໜ້ອຍ 72 ຊົ່ວໂມງ ລັດພາຄີ .ທີ່ໄດ້ຮັບການຮ້ອງຂໍຈະຕ້ອງດຳເນີນມາດຕະການດ້ານບໍລິຫານ ທີ່ຈຳເປັນສຳລັບການເດີນທາງ ແລະ ການຈັດຫາທີ່ພັກເຊົາໃຫ້ແກ່ ຄະນະດັ່ງກ່າວ ແລະ ຈະຕ້ອງຮັບຜິດຊອບການປະກັນຄວາມປອດໄພແກ່ຄະນະໃນຂອບເຂດທີ່ກວ້າງທີ່ສຸດເທົ່າທີ່ເປັນໄປໄດ້ໃນລະຫວ່າງເວລາທີ່ຄະນະຢູ່ໃນດິນແດນທີ່ຢູ່ພາຍໃຕ້ການຄວບຄຸມຂອງ ລັດພາຄີ ນັ້ນ.

12. ຄະນະກວດຂໍ້ແທ້ຈິງອາດນຳອຸປະກອນທີ່ຈຳເປັນ ຊຶ່ງຈະໃຊ້ສະເພາະໃນການເກັບຂໍ້ມູນກ່ຽວກັບເລື່ອງການປະຕິບັດຕາມອະນຸສັນຍາ ທີ່ກ່າວອ້າງເຂົ້າໄປໃນດິນແດນຂອງລັດທີ່ໄດ້ຮັບການຮ້ອງຂໍໄດ້ ໂດຍບໍ່ເປັນສິ່ງທີ່ເສື່ອມເສັຍຕໍ່ອະທິປະໄຕຂອງລັດທີ່ໄດ້ຮັບການຮ້ອງຂໍ. ຄະນະຈະຕ້ອງແຈ້ງ ລັດພາຄີ ທີ່ໄດ້ຮັບການຮ້ອງຂໍກ່ອນເດີນທາງມາຮອດວ່າ ມີຈຸດປະສົງຈະໃຊ້ອຸປະກອນໃດໜຶ່ງ ເພື່ອນຳໃຊ້ໃນວຽກງານຂອງຄະນະ ກວດສອບຂໍ້ແທ້ຈິງ .

13. ລັດພາຄີ ທີ່ໄດ້ຮັບການຮ້ອງຂໍຈະພະຍາຍາມທຸກສິ່ງທຸກຢ່າງທີ່ຈະດຳເນີນການໃຫ້ແນ່ໃຈວ່າ ຄະນະກວດສອບ ຂໍ້ແທ້ຈິງໄດ້ຮັບໂອກາດໃນການພົບປະສົນທະນາ ກັບ ບຸກຄົນ ທີ່ກ່ຽວຂ້ອງທັງໝົດ ຊຶ່ງອາດ ອຳນວຍຂໍ້ມູນ ທີ່ກ່ຽວກັບເລື່ອງການປະຕິບັດຕາມອະນຸສັນຍາທີ່ກ່າວອ້າງໄດ້ .

14. ລັດພາຄີ ທີ່ໄດ້ຮັບການຮ້ອງຂໍຈະຕ້ອງອະນຸຍາດໃຫ້ ຄະນະກວດສອບ ຂໍ້ແທ້ຈິງເຂົ້າ ເຖິງ ພື້ນທີ່ ແລະ ທີ່ຕັ້ງທຸກແຫ່ງທີ່ຢູ່ພາຍໃຕ້ການຄວບຄຸມຂອງລັດພາຄີ ນັ້ນ ຊຶ່ງຄາດໝາຍໄດ້ວ່າ ຈະສາມາດລວບລວມຂໍ້ແທ້ຈິງ ກ່ຽວກັບ ເລື່ອງ ການປະຕິບັດຕາມອະນຸສັນຍາທີ່ກ່າວອ້າງໄດ້, ທັງນີ້ໃຫ້ຂຶ້ນຢູ່ ກັບ ການຈັດການໃດໆ ທີ່ລັດພາຄີ ທີ່ໄດ້ຮັບການຮ້ອງຂໍ ພິຈາລະນາວ່າຈຳເປັນສຳລັບ .

ເອ ) ການລະວັງປ້ອງກັນ ອຸປະກອນ ຂໍ້ມູນ ແລະ ພື້ນທີທີ່ມີລັກສະນະລະອຽດອ່ອນ

ບີ ) ການຄຸ້ມຄອງພັນທະຕາມລັດຖະທຳມະນູນທີ່ ລັດພາຄີ ທີ່ໄດ້ຮັບການຮ້ອງຂໍອາດຈະມີໃນເລື່ອງກຳມະສິດ ການຊອກຄົ້ນ ແລະ ການ ຍຶດ ຫລື ສິດທິທາງລັດຖະມະນູນອື່ນໃດ ຫລື

ຊີ ) ການຄຸ້ມກັນທາງດ້ານຮ່າງກາຍ ແລະ ຄວາມປອດໄພຂອງສະມາຊິກຂອງຄະນະ ກວດສອບຂໍ້ແທ້ຈິງ ໃນກໍລະນີທີ່ ລັດພາຄີ ທີ່ໄດ້ຮັບການຮ້ອງຂໍດຳເນີນການ ດັ່ງກ່າວລັດພາຄີ ນັ້ນຈະພະຍາຍາມຢ່າງສົມເຫດສົມຜົນທຸກປະການ ທີ່ຈະສະແດງວ່າໄດ້ປະຕິບັດຕາມອະນຸສັນຍານີ້ດ້ວຍວິທີທາງອື່ນແທນ .

15. ຄະນະກວດສອບຂໍ້ແທຈິງອາດຢູ່ໃນດິນແດນຂອງລັດພາຄີ ທີ່ກ່ຽວຂ້ອງໄດ້ບໍ່ເກີນ 14 ວັນ ແລະ ໃນພື້ນທີ່ສະເພາະໃດໆໂດຍບໍ່ເກີນ 7 ວັນ ເວັ້ນເສັຍແຕ່ໄດ້ມີການຕົກລົງກັນເປັນຢ່າງອື່ນ.

16. ຂໍ້ມູນທັງໝົດທີ່ໄດ້ໃຫ້ໂດຍທາງລັບ ແລະ ບໍ່ກ່ຽວກັບ ຫົວຂໍ້ເລື່ອງ ຂອງພາລະກິດ ກວດສອບຂໍ້ແທ້ງຈິງ ໃຫ້ຖືເປັນຄວາມລັບ .

17. ຄະນະກວດສອບຂໍ້ແທ້ຈິງ ຈະລາຍງານຜົນການກວດສອບຂໍ້ແທ້ຈິງ ຕໍ່ທີ່ປະຊຸມລັດພາຄີ ຫລື ທີ່ປະຊຸມລັດພາຄີ ສະໄໝພິເສດໂດຍຜ່ານ ເລຂາທິການ ສະຫະປະຊາຊາດ.

18. ທີ່ປະຊຸມລັດພາຄີ ຫລື ທີ່ປະຊຸມລັດພາຄີ ສະໄໝພິເສດຈະພິຈາລະນາ ຂໍ້ມູນ ທີ່ກ່ຽວຂ້ອງລວມທັງບົດລາຍງານທີ່ສະເໜີໂດຍຄະນະ ກວດສອບ ຂໍ້ແທ້ຈິງ ແລະ ອາດຈະຮ້ອງຂໍໃຫລັດພາຄີ ທີ່ໄດ້ຮັບການຮ້ອງຂໍດຳເນີນມາດຕະການເພື່ອແກ້ໄຂ ເລື່ອງການປະຕິບັດຕາມອະນຸສັນຍານັ້ນພາຍໃນລະຍະເວລາ ທີ່ກຳນົດແນ່ນອນລັດພາຄີ ທີ່ໄດ້ຮັບການຮ້ອງຂໍຈະລາຍງານມາດຕະການທີ່ໄດ້ດຳເນີນການເພື່ອຕອບສະໜອງຄຳຮອງດັ່ງກ່າວ.

19. ທີ່ປະຊຸມລັດພາຄີ ຫລື ທີ່ປະຊຸມລັດພາຄີ ສະໄໝພິເສດອາດຈະສະເໜີແນະຫົນທາງ ແລະ ວິທີທາງແກ່ລັດພາຄີ ທີ່ກ່ຽວຂ້ອງໃຫ້ຄວາມກະຈ່າງແຈ້ງເພີ້ມເຕີມຂຶ້ນ ຫລື ແກ້ໄຂບັນຫາທີ່ກຳລັງພິ ຈາລະນາ ເຊິ່ງລວມ ເຖິງການ ເລີ່ມຕົ້ນຂະບວນການທີ່ເໝາະສົມໂດຍສອດຄ່ອງ ກັບ ກົດໝາຍລະຫວ່າງປະເທດ. ໃນພຶດຕິການທີ່ເລື່ອງພິຈາຈາລະນາໄດ້ຮັບການຊີ້ຂາດວ່າເປັນຜົນຈາກພຶດຕິການທີ່ຢູ່ນອກເໜືອການຄວບຄຸມຂອງລັດພາຄີ ທີ່ໄດ້ຮັບການຮ້ອງຂໍ ທີ່ປະຊຸມ ລັດພາຄີ ຫລື ທີ່ປະຊຸມລັດພາຄີ ສະໄໝພິເສດອາດສະເໜີ ແນະ ມາດຕະການທີ່ເໝາະສົມ ຊຶ່ງລວມ ເຖິງ ການໃຊ້ມາດຕະການຄວາມຮ່ວມມືຕາມທີ່ອ້າງ ເຖິງ ໃນມາດຕາ 6.

20. ທີ່ປະຊຸມລັດພາຄີ ຫລື ທີ່ປະຊຸມລັດພາຄີ ສະໄໝພິເສດຈະພະຍາຍາມທຸກປະການ ທີ່ຈະບັນລຸຂໍ້ຕັດສິນຕາມທີ່ອ້າງອີງ ເຖິງ ໃນວັກ 18 ແລະ 19 ໂດຍຕົກລົງ ກັນ ຫລື ບໍ່ສະນັ້ນໂດຍສຽງສ່ວນຫລາຍສອງໃນສາມຂອງ ລັດພາຄີ ທີ່ມາປະຊຸມ ແລະ ລົງຄະແນນສຽງ.

## ມາດຕາ 9
## ມາດຕະການຈັດຕັ້ງປະຕິບັດໃນລະດັບຊາດ

ລັດພາຄີ ແຕ່ລະລັດຈະດຳເນີນມາດຕະການດ້ານກົດໝາຍ ດ້ານບໍລິຫານ ແລະ ດ້ານອື່ນໆ ທີ່ເໝາະສົມລວມທັງການກຳນົດບົດລົງໂທດທາງອາຍາ ເພື່ອປ້ອງກັນ ແລະ ປາບປາມ ກິດຈະກຳໃດໆ ຊຶ່ງຕ້ອງຫ້າມສຳລັບ ລັດພາຄີ ພາຍໃຕ້ອະນຸສັນຍານີ້ທີ່ກະທຳໂດຍບຸກຄົນ ຫລື ໃນອານາເຂດພາຍໃຕ້ເຂດອຳນາດ ຫລື ການຄວບຄຸມຂອງລັດພາຄີ ນັ້ນ.

## ມາດຕາ 10
## ການລະງັບໄກ່ເກຍ ຂໍ້ຜິດພາດ

1. ລັດພາຄີ ຈະປຶກສາຫາລື ຫລື ຮ່ວມມື ເຊິ່ງກັນ ແລະ ກັນ ເພື່ອລະງັບຂໍ້ຜິດພາດໃດໆ ທີ່ອາດເກີດຂຶ້ນໃນສ່ວນທີ່ກ່ຽວພັນກັບການປະຕິບັດ ຫລື ການຕີຄວາມໝາຍຂອງອານຸສັນຍານີ້ລັດພາຄີ ແຕ່ລະລັດອາດນຳຂໍ້ຜິດພາດດັ່ງກ່າວສະເໜີຕໍ່ທີ່ປະຊຸມລັດພາຄີ .

2. ທີ່ປະຊຸມລັດພາຄີ ອາດມີສ່ວນຊ່ວຍລະງັບ ຂໍ້ຜິດພາດໂດຍທຸກວິທີທາງທີ່ເຫັນວ່າເໝາະສົມ ຊຶ່ງລວມທັງການສະເໜີຕົວແທນ ເປັນຜູ້ຮັບຕິດຕໍ່ການຮຽກຮ້ອງໃຫ້ລັດທີ່ເປັນຄູ່ກໍລະນີໃນຂໍ້ຜິດພາດເລີ່ມປະຕິບັດຂະບວນການລະງັບຂໍ້ຜິດພາດຕາມທາງເລືອກຂອງລັດເຫຼົ່ານັ້ນ ແລະ ການສະເໜີແນະນຳກຳນົດໄລຍະເວລາສຳລັບຂະບວນການໃດໆ ທີ່ຕົກລົງຮ່ວມກັນ.

3. ຂໍ້ຄວາມໃນມາດຕານີ້ ບໍ່ ເປັນທີ່ຈະເສືອມເສັຍຕໍ່ບັນຍັດຂອງອະນຸສັນຍານີ້ໃນເລື່ອງການອຳນວຍຄວາມສະດວກ ແລະ ການໃຫ້ຄວາມກະຈ່າງແຈ້ງໃນການປະຕິບັດພັນທະໜ້າທີ່ .

## ມາດຕາ 11
## ການປະຊຸມລັດພາຄີ

1. ລັດພາຄີ ຈະປະຊຸມໂດຍສະໝຳສະເໝີ ເພື່ອພິຈາລະນາເລື່ອງໃດໆ ທີ່ກ່ຽວກັບການໃຊ້ ຫລື ການຈັດຕັ້ງປະຕິບັດຂອງອະນຸສັນຍານີ້ ເຊິ່ງລວມ ເຖິງ :

ເອ) ການປະຕິບັດການ ແລະ ສະຖານະການຂອງອະນຸສັນຍານີ້

ບີ ) ເລື່ອງຕ່າງໆ ທີ່ເກີດຈາການລາຍງານ ທີ່ສະເໜີຕາມບັນຍັດຂອງອະນຸສັນຍານີ້.

ຊີ ) ຄວາມຮ່ວມມື ແລະ ຄວາມຊ່ວຍເຫລືອລະຫວ່າງ ຊາດຕາມມາດຕາ 6

ດີ )	ການພັດທະນາຂອງເຕັກໂນໂລຊີເພື່ອ ເກັບກູ້ທຸ່ນລະເບີດສັງຫານບຸກຄົນ.

ອີ )	ເລື່ອງທີ່ລັດພາຄີ ສະເໜີພາຍໃຕ້ມາດຕາ 8 ແລະ

ແຟບ ) ຂໍ້ຕັດສິນ ກ່ຽວກັບ ເລື່ອງທີ່ລັດພາຄີ ສະເໜີຕາມທີ່ໄດ້ບັນຍັດໄວ້ໃນ ມາດຕາ 5.

2. ການປະຊຸມລັດພາຄີ ຄັ້ງທຳອິດຈະຈັດຂື້ນໂດຍ ເລຂາທິການ ສະຫະປະຊາຊາດ ພາຍໃນ 1ປີ ຫຼັງຈາກການມີການບັງຄັບໃຊ້ຂອງອະນຸສັນຍານີ້ , ກອງປະຊຸມຄັ້ງຕໍ່ໄປຈະຈັດຂື້ນທຸກປີ ໂດຍເລຂາທິການ ສະຫະປະຊາຊາດ ຈົນກວ່າຈະມີການປະຊຸມທົບທວນ ຄັ້ງທຳອິດ.

3. ພາຍໃຕ້ເງື່ອນໄຂ ທີ່ກຳນົດໄວ້ ໃນມາດຕາ 8 ເລຂາທິການສະຫະປະຊາຊາດ ຈະຈັດະອງປະຊຸມລັດພາຄີ  ສະໄໝພິເສດ.

4. ລັດທີ່ບໍ່ແມ່ນ ລັດພາຄີ ຂອງອະນຸສັນຍານີ້ ເຊັ່ນດຽວກັບສະຫະປະຊາຊາດ ສະຖາບັນ ແລະອົງການລະຫວ່າງປະເທດ ທີ່ກ່ຽວຂ້ອງອື່ນ ໆ ອົງການລະດັບພູມມິພາກ ຄະນະກຳມະການກາຊາດ ລະຫ່ວາງປະເທດ ແລະອົງການທີ່ບໍ່ຂື້ນກັບລັດຖະບານທີ່ກ່ຽວຂ້ອງ ອາດໄດ້ຮັບເຊີນເຂົ້າຮ່ວມ ການປະຊຸມໃນຖານະເປັນຜູ້ສັງເກດການ ໂດຍສອດ.ຄ່ອງ ກັບ ຂໍ້ບັງຄັບການປະຊຸມທີ່ໄດ້ຕົກລົງກັນ.

## ມາດຕາ 12
## ການປະຊຸມທົບທວນ

1. ການປະຊຸມທົບທວນທີ່ຈັດຂື້ນໂດຍເລຂາທິການສະຫະປະຊາຊາດ 5 ປີ ຫລັງຈາກການຜົນບັງຄັບໃຊ້ຂອງອະນຸສັນຍານີ້. ການປະຊຸມທົບທວນຄັ້ງຕໍ່ໄປຈະຈັດຂື້ນໂດຍເລຂາທິການສະຫະປະຊາຊາດຫາກໄດ້ຮັບການຮ້ອງຂໍໂດຍລັດສະມາຊິກໜຶ່ງລັດຫລື ຫລາຍກວ່າ ໂດຍມີເງື່ອນໄຂວ່າ ຊ່ວງເວລາສະຫວ່າງການປະຊຸມທົວທວນແຕ່ລະຄັ້ງຈະບໍ່ໜ້ອຍກວ່າ 5 ປີ ບໍ່ວ່າໃນກໍລະນີໃດລັດພາຄີ  ຂອງອະນຸສັນຍານີ້ທັງໝົດຈະໄດ້ຮັບເຊີນໄປຮ່ວມການປະຊຸມທົບທວນແຕ່ລະຄັ້ງ.

2. ຈຸດປະສົງຂອງການປະຊຸມທົບທວນມີຄືດັ່ງນີ້ :

(ເອ)	ເພື່ອທົບທວນການປະຕິບັດການ ແລະ ສະຖານະການຂອງອະນຸສັນຍານີ້

ບີ)	ເພື່ອພິຈາລະນາຄວາມຈຳເປັນ ແລະ ຊ່ວງເວລາລະຫວ່າງການປະຊຸມ ລັດພາຄີ   ແຕ່ລະຄັ້ງຕາມທີ່ອ້າງອີງ ເຖິງໃນ ວັນກ 2 ຂອງມາດຕາ 11

ຊີ )	ເພື່ອຕັດສິນກ່ຽວກັບ ເລື່ອງທີ່ ລັດພາຄີ  ສະເໜີຕາມທີ່ໄດ້ບັນຍັດໄວ້ໃນມາດຕາ 5 ແລະ

ດີ )	. ຫາກຈຳເປັນ ເພື່ອຮັບເອົາຂໍ້ສະຫລຸບກ່ຽວກັບການຈັດຕັ້ງປະຕິບັດອະນຸສັນຍານີ້ ໃນບົດລາຍງານສຸດທ້າຍຂອງການປະຊຸມ.

3. ລັດທີ່ບໍ່ແມ່ນພາຄີ ຂອງອະນຸສັນຍານີ້ ເຊັ່ນດຽວກັບສະຫະປະຊາຊາດ , ສະຖາບັນ ແລະ ອົງການ ລະຫວ່າງປະເທດ ທີ່ກ່ຽວຂ້ອງອື່ນໆ , ອົງການລະດັບພູມີພາກ, ຄະນະການກາຊາດ ລະຫວ່າງປະເທດ ແລະ ອົງການທີ່ບໍ່ຂື້ນ ກັບ ລັດຖະບານ ທີ່ກ່ຽວຂ້ອງອາດໄດ້ຮັບເຊີນໃຫ້ເຂົ້າຮ່ວມການປະຊຸມ ທົບທວນແຕ່ລະຄັ້ງໃນຖານະຜູ້ສັງເກດການໂດຍສອດຄ່ອງ ກັບ ຂໍ້ບັງຄັບກົດລະບຽບການປະຊຸມທີ່ໄດ້ຕົກ ລົງ ກັນ .

## ມາດຕາ 13
## ການດັດແກ້ອະນຸສັນຍາ

1. ເມື່ອໃດກໍຕາມຫລັງຈາກການມີຜົນບັງຄັບໃຊ້ຂອງອະນຸສັນຍານີ້ ລັດພາຄີ ໃດໆນຶ່ງ ອາດຈະສະເໜີການດັດແກ້ ອະນຸສັນຍານີ້ໄດ້ . ຂໍ້ສະເໜີໃດໆ ສຳລັບການດັດແກ້ຕ້ອງແຈ້ງໃຫ້ຜູ້ທີ່ຈະໝູນວຽນ ຂໍ້ສະເໜີດັ່ງກ່າວໄປຍັງບັນດາ ລັດພາຄີ ທັງໝົດ ແລະ ຂໍ ຄວາມເຫັນຂອງ ລັດພາຄີ ທັງໝົດວ່າຄວນຈະຈັດການປະຊຸມເພື່ອດັດແກ້ອະນຸສັນຍາຂື້ນເພື່ອພິຈາລະນາຂໍ້ສະເໜີ ຫລື ບໍ - ຫາກພາຍໃນ 30 ວັນ ຫລັງຈາກການໝູນວຽນ ຂໍ້ສະເໜີ ລັດພາຄີ ສ່ວນຫລາຍແຈ້ງແກ່ຜູ້ເກັບຮັກສາວ່າສະໜັບສະໜູນການພະຈາລະນາຂໍ້ສະເໜີຕໍ່ໄປ ຜູ້ເກັບຮັກສາຈະຈັດການປະຊຸມເພື່ອດັດແກ້ອະນຸສັນຍາ ໂດຍຈະເຊີນ ລັດພາຄີ ທັງໝົດເຂົ້າຮ່ວມນຳ .

2. ລັດທີ່ບໍ່ແມ່ນພາຄີຂອງອະນຸສັນຍານີ້ ເຊັ່ນດຽວກັບ ສະຫະປະຊາຊາດ, ສະຖາບັນ ແລະ ອົງການ ລະຫວ່າງປະເທດທີ່ກ່ຽວຂ້ອງອື່ນໆ , ອົງການລະດັບພູມີພາກ, ຄະນະກຳມາການກາຊາດລະຫວ່າງປະເທດ ແລະ ອົງການ ທີ່ບໍ່ຂື້ນ ກັບ ລັດຖະບານ ທີ່ກ່ຽວຂ້ອງ ອາດໄດ້ຮັບເຊີນໃຫ້ເຂົ້າຮ່ວມການປະຊຸມເພື່ອດັດແກ້ອະນຸສັນຍາໃນແຕ່ລະຄັ້ງໃນຖານະຜູ້ສັງເກດການ ໂດຍສອດຄ່ອງ ກັບ ຂໍ້ບັງຄັບກົດລະບຽບການປະຊຸມທີ່ໄດ້ຕົກລົງກັນ .

3. ການປະຊຸມເພື່ອດັດແກ້ອະນຸສັນຍາຈະຈັດຂື້ນທັນທີ່ຫລັງຈາກການປະຊຸມ ລັດພາຄີ ຫລື ການປະຊຸມທົບທວນ ເວັ້ນເສັຍແຕ່ ລັດພາຄີສ່ວນຫລາຍໄດ້ຮ້ອງຂໍໃຫ້ຈັດຂື້ນໄວໆ

4. ໃຫ້ຮັບເອົາການດັດແກ້ອະນຸສັນຍາໃດໆ ໂດຍສຽງສ່ວຍຫລາຍສອງໃນສາມຂອງລັດພາຄີ ທີ່ມາປະຊຸມແລະ ລົງຄະແນກສຽງໃນທີ່ປະຊຸມ ເພື່ອດັດແກ້ອະນຸສັນຍາ. ຜູ້ເກັບຮັກສາຈະແຈ້ງການ ດັດແກ້ທີ່ຖືກຮັບເອົາແລ້ວໄປຍັງບັນດາລັດພາຄີ .

5. ການດັດແກ້ອະນຸສັນຍານີ້ໃດໆ ຈະມີຜົນບັງຄັບໃຊ້ສຳລັບ ລັດພາຄີ ຂອງອະນຸສັນຍານີ້ທັງໝົດ ຊຶ່ງໄດ້ຍອມຮັບການດັດແກ້ນັ້ນ ເມື່ອມີການສົ່ງມອບ ສານການຍອມຮັບໂດຍ ລັດພາຄີ ສ່ວນຫລາຍ. ຫລັງຈາກນັ້ນການດັດແກ້ນັ້ນຈະມີຜົນບັງຄັບໃຊ້ສຳລັບ ລັດພາຄີ ທີ່ຍັງເຫລືອອື່ນໆ ໃນວັນທີ່ສົ່ງມອບສານການຍອມຮັບຂອງລັດນັ້ນ.

## ມາດຕາ 14
## ຄ່າໃຊ້ຈ່າຍ

1. ລັດພາຄີ ແລະ ລັດທີ່ບໍ່ແມ່ນພາຄີຂອງອະນຸສັນຍານີ້ ທີ່ເຂົ້າຮ່ວມການປະຊຸມ ຈະຮັບຜິດຊອບຄ່າໃຊ້ຈ່າຍຂອງການປະຊຸມລັດພາຄີ , ການປະຊຸມລັດພາຄີ ສະໄໝພິເສດ, ການປະຊຸມ ທົບທວນ ແລະ ການປະຊຸມເພື່ອດັດແກ້ ອະນຸສັນຍາ ຕາມ ຊັດສ່ວນ ຂອງອັດຕາການປະເມີນຂອງ ສະຫະປະຊາຊາດ ທີ່ໄດ້ປັບຢ່າງເໝາະສົມ .

2. ລັດພາຄີ ຈະຮັບຜິດຊອບຄ່າໃຊ້ຈ່າຍທີ່ເກີດຂື້ນແກ່ໂດຍເລຂາທິການ ສະຫະປະຊາຊາດ ພາຍໃຕ້ມາດຕາ 7 ແລະ 8 ແລະ ຄ່າໃຊ້ຈ່າຍໃນພາລະກິດກວດສອບຂໍ້ແທ້ຈິງໃດໆ ຕາມຊັດສ່ວນອັດຕາປະເມີນຂອງສະຫະປະຊາຊາດທີ່ໄດ້ຖືກປັບຢ່າງເໝາະສົມ.

## ມາດຕາ 15
## ການລົງນາມ

ອະນຸສັນຍານີ້ ຊຶ່ງທຳທີ່ ກຸງໂອສໂລ ປະເທດນອກເວ ເມື່ອວັນທີ 18 ກັນຍາ 1997 ຈະເປີດໃຫ້ລັດທັງໝົດລົງນາມທີ່ ກຸງອົດຕາວາ ປະເທດ ການາດາ ຕັ້ງແຕ່ວັນ 3 ທັນວາ 1997 ຈົນ ເຖິງ ວັນທີ 4 ທັນວາ 1997 ແລະ ທີ່ສຳນັກງານໃຫຍ່ ສະຫະປະຊາຊາດ ທີ່ນະຄອນນີວຢອກ ຕັ້ງແຕ່ ວັນທີ 5 ທັນວາ 1997 ຈົນ ເຖິງ ວັນທີ ທີ່ອະນຸສັນຍາມີຜົນບັງຄັບໃຊ້ .

## ມາດຕາ 16
## ການໃຫ້ສັດຍາບັນ, ການຍ້ອມຮັບ , ການໃຫ້ຄວາມເຫັນຊອບຫລື ການຮັດກຸ່ມໃຫ້ນຳໃຊ້

1. ອະນຸສັນຍານີ້ຢູ່ພາຍໃຕ້ບັງຄັບຂອງ ການໃຫ້ສັດຍາບັນ, ການຍ້ອມຮັບ ຫລື ການໃຫ້ຄວາມເຫັນດີເຫັນຊອບໂດຍລັດຜູ້ລົງນາມ.

2. ອະນຸສັນຍານີ້ຈະເປີດໃຫ້ ຮັດກຸມ ລັດໃດກໍຕາມທີ່ບໍ່ໄດ້ລົງນາມອານຸສັນຍາ

3. ສັນຍາບັນສານ, ສານການຍອມຮັບ , ສານໃຫ້ຄວາມເຫັນຊອບ ຫລື ການຮັດກຸມໃຫ້ນຳໃຊ້ ໃຫ້ສົ່ງມອບແກ່ຜູ້ເກັບຮັກສາ.

## ມາດຕາ 17
## ການມີຜົນບັງຄັບໃຊ້

1. ອະນຸສັນຍາຈະມີຜົນບັງຄັບໃຊ້ໃນມື້ທຳອິດຂອງເດືອນທີ 6 ຫລັງຈາກເດືອນທີ່ມີການສົ່ງມອບສັດຍາບັນສານການຍອມຮັບ , ສານໃຫ້ຄວາມເຫັນດີເຫັນຊອບ ຫລື ສານ ຮັດກຸມໃຫ້ນຳໃຊ ສະບັບທີ 40.

2. ສຳລັບລັດໃດທີ່ສົ່ງມອບສັດຍາບັນສານ, ສານການຍອມຮັບ, ສານໃຫ້ຄວາມເຫັນດີເຫັນຊອບ ຫລື ສານຮັດກຸມໃຫ້ນຳໃຊ້ ຂອງລັດນັ້ນຫລັງຈາກວັນທີສົ່ງມອບສັດຍາບັນສານ , ສານການຍອມຮັບ , ສານໃຫ້ຄວາມເຫັນດີເຫັນຊອບຫລື ສານ ຮັດກຸມໃຫ້ນຳໃຊ້ ສະບັບທີ 40 , ອະນຸສັນຍານີ້ຈະມີຜົນບັງຄັບໃຊ້ໃນມື້ ທຳອິດຂອງເດືອນ ທີ 6 ຫລັງຈາກວັນທີ ລັດນັ້ນໄດ້ສົ່ງມອບສັດຍາບັນສານ, ສານການຍອມຮັບ, ສານໃຫ້ຄວາມເຫັນດີເຫັນຊອບ ຫລື ສານ ຮັດກຸມໃຫ້ນຳໃຊຂອງລັດນັ້ນ.

**ມາດ ຕາ 18**

**ການນຳໃຊ້ອະນຸສັນຍາເປັນການຊົ່ວຄາວ**

ລັດໃດໆອາດປະກາດໃນຂະນະທີ່ລັດນັ້ນໃຫ້ສັດຍາບັນ , ຍອມຮັບ, ໃຫ້ຄວາມເຫັນດີເຫັນຊອບ ຫລື ການຮັດກຸມໃຫ້ນຳໃຊ້ ວ່າລັດນັ້ນຈະນຳໃຊ້ ວັກທີ 1 ຂອງມາດຕາ 1 ຂອງອະນຸສັນຍານີ້ ເປັນການຊົ່ວຄາວໃນລະຫວ່າງທີ່ລໍຖ້າ ໃຫ້ ອະນຸສັນຍານີ້ມີຜົນບັງຄັບໃຊ້ .

**ມາດຕາ 19**

**ຂໍ້ສະຫງວນ**

ມາດຕາຕ່າງໆ ຂອງອະນຸສັນຍານີ້ຈະບໍ່ຢູ່ພາຍໃຕ້ບັງຄັບຂອງຂໍ້ສະຫງວນ

**ມາດຕາທີ 20**

**ໄລຍະເວລາ ແລະ ການຖອນຕົວ**

1. ອະນຸສັນຍານີ້ມີໄລຍະເວລາໃຊ້ໄດ້ໂດຍບໍ່ຈຳກັດ

2. ລັດພາຄີ ແຕ່ລະລັດ ໃນການໃຊ້ອະທິປະໄຕຂອງຊາດ ມີສິດທີ່ ທີ່ຈະຖອນຕົວຈາກອະນຸສັນຍານີ້ ລັດພາຄີ ນັ້ນຈະແຈ້ງການຖອນຕົວດັ່ງກ່າວໄປຍັງ ລັດພາຄີ ອື່ນໆທັງໝົດ; ໄປຍັງຜູ້ຮັກສາ ແລະ ໄປຍັງຄະນະມົນຕີຄວາມໝັ້ນຄົງຂອງສຫະປະຊາຊາດ. ສານການຖອນຕົວຕ້ອງໃຫ້ລວມ ເຖິງ ຄຳອະທິບາຍຢ່າງສົມບູນກ່ຽວກັບ ເຫດຜົນຂອງການຖອນຕົວດັ່ງກ່າວ.

3. ການຖອນຕົວດັ່ງກ່າວຈະມີຜົນຕໍ່ເມື່ອ 6 ເດືອນ ຫລັງຈາກທີ່ຜູ້ເກັບຮັກສາໄດ້ຮັບສານຖອນຕົວ. ຢ່າງໃດກໍຕາມ , ຫາກເມື່ອຄົບກຳນົດ 6 ເດືອນ ລັດພາຄີ ຜູ້ຖອນຕົວກຳລັງຢູ່ໃນການຂັດກັນດ້ວຍອາວຸດ ການຖອນຕົວຈບໍ່ມີຜົນສັກສິດກ່ອນການສິ້ນສຸດຂອງການຂັດກັນດ້ວຍອາວຸດນັ້ນ.

4. ການຖອນຕົວຂອງ ລັດພາຄີ ຈາກອະນູສັນຍານີ້ຈະບໍ່ມີຜົນກະທົບໂດຍທາງໃດໆ ຕໍ່ໜ້າທີ່ຂອງລັດທີ່ຈະຕ້ອງປະຕິບັດຕາມ ພັນທະໜ້າທີ ທີ່ມີພາຍໃຕ້ກົດລະບຽບທີ່ກ່ຽວຂ້ອງໃດໆ ຂອງກົດໝາຍລະຫວ່າງປະເທດຕໍ່ໄປ .

## ມາດຕາ 21
## ຜູ້ເກັບຮັກສາ

ໃຫ້ເລຂາທິການສະຫະປະຊາຊາດເປັນຜູ້ເກັບຮັກສາອະນຸສັນຍານີ້

## ມາດຕາ ທີ່ 22
## ສະບັບອະນຸສັນຍາ ທີ່ຖືກຕ້ອງ

ຕົ້ນສະບັບຂອງອະນຸສັນຍານີ້ ຊຶ່ງຈັດທຳ ຂື້ນເປັນພາສາອາຣັບ ພາສາຈີນ, ພາສາອັງກິດ , ພາສາຝຣັ່ງເສດ, ພາສາລັດເຊຍ ແລ ພາສາສະເປນ ເປັນຕົ້ນສະບັບ ທີ່ຖືກຕ້ອງເທົ່າທຽມ ກັນ ແລະ ໃຫ້ເກັບຮັກສາໄວ້ກັບເລຂາທິການສະຫະປະຊາຊາດ .